ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ969/ພນ

ນະຄອນຫຼວງວຽງຈັນ, ວັນທີ26 ທັນວາ 2016

# ຂໍ້ຕົກລົງ

## ວ່າດ້ວຍ ມາດຕະຖານບ້ານໜັກແໜ້ນເຂັ້ມແຂງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ)ເລກທີ68/ສພຊ,ລົງວັນທີ14 ທັນວາ 2015;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 253/ນຍ, ລົງວັນທີ 19 ສິງຫາ 2011 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງພາຍໃນ;

## ລັດຖະມົນຕີກະຊວງພາຍໃນ ອອກຂໍ້ຕົກລົງ

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະຖານແລະ ມາດຕະການ ກ່ຽວກັບບ້ານໜັກແໜ້ນເຂັ້ມແຂງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ຂອງຄອບຄົວແລະ ບ້ານ ພັດທະນາ ໃຫ້ມີຄວາມເປັນເອກະພາບກັນ ແນໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2. ບ້ານໜັກແໜ້ນເຂັ້ມແຂງ**

ບ້ານໜັກແໜ້ນເຂັ້ມແຂງໝາຍເຖິງ ອົງການປົກຄອງບ້ານມີການຈັດຕັ້ງທີ່ຄົບຖ້ວນ, ມີການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ; ມີການເຄື່ອນໄຫວບັນລຸຕາມທິດທາງແຜນການຂອງບ້ານເປັນແຕ່ລະໄລຍະແລະສາມາດນຳພາ, ຄຸ້ມຄອງບໍລິຫານວຽກງານຕ່າງໆຂອງບ້ານໄດ້ດີ.

**ມາດຕາ 3. ທິດນຳ**

ການຈັດຕັ້ງປະຕິບັດ ການສ້າງບ້ານໜັກແໜ້ນເຂັ້ມແຂງ ໃຫ້ປະຕິບັດຕາມທິດນຳ ດັ່ງນີ້:

1. ຮັບປະກັນຄວາມເປັນເອກະພາບ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ຮັກສາໄດ້ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສາມັກຄີ;
3. ຈັດຕັ້ງປະຕິບັດໃຫ້ມີລັກສະນະຕໍ່ເນື່ອງ ແລະ ມີສະເຖຍລະພາບ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບ້ານໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ມາດຕະຖານບ້ານໜັກແໜ້ນເຂັ້ມແຂງ

**ມາດຕາ 5. ມາດຕະຖານບ້ານໜັກແໜ້ນເຂັ້ມແຂງ**

ບ້ານໜັກແໜ້ນເຂັ້ມແຂງ ແມ່ນບ້ານທີ່ມີມາດຕະຖານດັ່ງນີ້:

1. ອົງການປົກຄອງບ້ານມີ 5 ໜ່ວຍງານຊ່ວຍວຽກບ້ານ;
2. ມີການປະກອບບຸກຄະລາກອນຕາມລະບຽບການ;
3. ມີລະບຽບໃນການຄຸ້ມຄອງບໍລິຫານບ້ານ;
4. ມີຫ້ອງການບ້ານຖາວອນ;
5. ມີການປະຈໍາການຂອງອົງການປົກຄອງບ້ານເປັນປົກກະຕິ;
6. ມີແຜນພັດທະນາຂອງບ້ານ;
7. ມີລາຍຮັບສາມາດກຸ້ມລາຍຈ່າຍບໍລິຫານປົກກະຕິ;
8. ມີການເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ;
9. ມີການຈົດທະບຽນການເກີດຢ່າງໜ້ອຍ 80%;
10. ມີການບໍລິການທີ່ດີຂອງອົງການປົກຄອງບ້ານ.

**ມາດຕາ 6. ຂັ້ນຕອນ**

ການສ້າງບ້ານໜັກແໜ້ນເຂັ້ມແຂງ ແມ່ນໃຫ້ຫ້ອງການພາຍໃນເປັນເຈົ້າການ ໂດຍໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄົ້ນຄວ້າກໍານົດບ້ານເປົ້າໝາຍ ແລະ ສ້າງແຜນການລະອຽດໃນການຈັດຕັ້ງປະຕິບັດແຕ່ລະໄລຍະ;
2. ນໍາພາ ແລະ ຊຸກຍູ້ບ້ານເປົ້າໝາຍຕາມແຜນການທີ່ກໍານົດໄວ້;
3. ປະເມີນຜົນ ບ້ານເປົ້າໝາຍເປັນແຕ່ລະໄລຍະ ເພື່ອປັບປຸງແກ້ໄຂຂໍ້ຄົງຄ້າງ;
4. ປະເມີນ, ສະຫຼຸບ ບ້ານເປົ້າໝາຍຕາມມາດຕະຖານ ແລະ ອອກໃບຢັ້ງຢືນ.

**ມາດຕາ 7. ການຢັ້ງຢືນ**

ການຢັ້ງຢືນບ້ານໜັກແໜ້ນເຂັ້ມແຂງ ແມ່ນຫົວໜ້າຫ້ອງການພາຍໃນ ເປັນຜູ້ຢັ້ງຢືນ.

## ໝວດທີ 3
## ນະໂຍບາຍ ແລະ ມາດຕະການ

**ມາດຕາ 8. ນະໂຍບາຍຕໍ່ບ້ານ ແລະ ບຸກຄົນ**

ອົງການປົກຄອງບ້ານ ແລະ ບຸກຄົນ ທີ່ມີການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໄດ້ດີ, ມີຄວາມເຂັ້ມງວດ ຈະໄດ້ຮັບການສະເໜີພິຈາລະນາຮັບການຍ້ອງຍໍຊົມເຊີຍ ຫຼື ນະໂຍບາຍອື່ນຕາມຄວາມເໝາະສົມ.

**ມາດຕາ 9. ມາດຕະການຕໍ່ບ້ານ ແລະ ບຸກຄົນ**

ອົງການປົກຄອງບ້ານ ແລະ ບຸກຄົນ ທີ່ປະຕິບັດຂໍ້ຕົກລົງສະບັບນີ້ບໍ່ໄດ້ດີຈະໄດ້ຮັບການແນະນໍາ, ສຶກສາອົບຮົມຕາມລະບຽບການ.

ໝວດທີ 4

ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

- ມອບໃຫ້ກົມການປົກຄອງທ້ອງຖິ່ນ, ກົມຄຸ້ມຄອງພົນລະເມືອງ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;
- ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ;
- ພະແນກພາຍໃນຂັ້ນແຂວງ, ຫ້ອງການພາຍໃນຂັ້ນເມືອງ, ອົງການປົກຄອງບ້ານ ຈົ່ງຮັບຮູ້ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;

**ມາດຕາ 11. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ຄຳເພັ້ນ ສຸນວິເລີດ